


# ຂ່າວ ປະຈຳເດືອນກັນຍາ



## ແຈ້ງເຕືອນ

1. ໃຫ້ນັກຮຽນກະກຽມເອົາກະຕຸກນ້ຳມາພ້ອມ
2. ກໍລະນີຜູ້ປົກຄອງຕ້ອງການເອົາຂະໜົມໃຫ້ກັບນັກຮຽນມາໂຮງຮຽນ ກະລຸນາສົ່ງເປັນຂະໜົມທີ່ດີຕໍ່ສຸຂະພາບ
3. ນັກຮຽນຄວນນຸ່ງຊຸດກິລາຂອງໂຮງຮຽນຕາມຕາຕະລາງທີ່ແຈ້ງໄວ້

## ງານພາຍໜ້າ

1. **ວັນທີ 15 ກັນຍາ ດື່ມກາເຟກັບຜູ້ອຳນວຍການ**
   (ເວລາ 7:30 - 8:30 ຢູ່ທີ່ຫ້ອງກາເຟຂອງໂຮງຮຽນ)
2. **ວັນທີ 6 ເດືອນ ຕຸລາ ວັນຄູແຫ່ງຊາດ**
   (ຈັດກິດຈະກຳພາຍໃນໂຮງຮຽນ)
3. **ວັນທີ 9-13 ເດືອນຕຸລາ ແມ່ນພັກການຮຽນການສອນ**
   (ພັກໂຮງຮຽນ)
4. **ວັນທີ 30 ເດືອນ ຕຸລາ ແມ່ນພັກການຮຽນການສອນ**
   (ບຸນຊ່ວງເຮືອ)

**ຄຣິກທີ່ນີ້ເພື່ອເຂົ້າໄປທີ່ IB PARENT PACKET**

### ພາລະກິດ:

ພວກເຮົາສ້າງແນວຄິດສາກົນພາຍໃນຊຸມຊົນທີ່ພົວພັນກັນດ້ວຍຫຼາຍພາສາ ແລະ ສຸມໃສ່ການພັດທະນານັກຮຽນໃຫ້ເກັ່ງຮອບດ້ານ, ຮູ້ຈັກຊ່ວຍເຫຼືອຜູ້ອື່ນ, ມີແນວຄິດເປີດກວ້າງ ແລະ ເປັນຜູ້ຮຽນຮູ້ທີ່ກ້າວໄກ

### ວິໄສທັດ:

ວິໄສທັດຂອງພວກເຮົາຄືການພັດທະນາບຸກຄົນໃຫ້ມີຄວາມໝັ້ນໃຈຮອບດ້ານ ແລະ ກ້າທີ່ຈະສະແດງສັກກະຍະພາບຂອງຕົນເອງອອກມາ



PYP CANDIDATE SCHOOL
© INTERNATIONAL BACCALAUREATE ORGANIZATION 2018



# "The Mitten"

## ຫ້ອງຮຽນອະນຸບານຂອງຄູ Vladimir

ຄລິກໃສ່ຫົວຂໍ້ເພື່ອເຂົ້າເບິ່ງໃນ YouTube ເລື່ອງ “The Mitten”

ຢູ່ໃນຫ້ອງຮຽນອະນຸບານຂອງພວກເຮົາ, ຄູ Vladimir ມີການຫຼິ້ນເກມທີ່ເປັນເອກະລັກ ແລະ ໃຫ້ຄວາມອົບອຸ່ນໃຈເພື່ອເຮັດໃຫ້ນັກຮຽນໄດ້ໃກ້ຊິດກັນຫຼາຍຂຶ້ນ. ການຫລິ້ນເກມນີ້ແມ່ນໄດ້ແຮງບັນດານໃຈຈາກນິທານພື້ນເມືອງຂອງປະເທດຢູເຄຣນທີ່ມີຊື່ວ່າ "The Mitten", ເກມດັ່ງກ່າວແມ່ນຈະໃຊ້ເຕັ້ນສະແດງລະຄອນສັດແທນຖົງມື ແລະນັກຮຽນພາກັນຜັດກັນເຂົ້າອອກໃນຖົງມືນັ້ນ ແລະອາໄສຢູ່ທີ່ນັ້ນ. ຢ່າງໃດກໍຕາມ, ຖ້າເຂົ້າໄປຂ້າງໃນ ນັກຮຽນຕ້ອງກາຍເປັນໝູ່ເພື່ອນກັບນັກຮຽນທີ່ອາໄສຢູ່ໃນເຕັ້ນນັ້ນ. ການຫຼິ້ນເກມນີ້ຈະຊ່ວຍເສີມສ້າງຈິນຕະນາການ ແລະ ເຂົ້າໃຈເຖິງຄວາມສຳຄັນຂອງການຮ່ວມມືກັນ, ການແບ່ງປັນ, ແລະການດູແລເຊິ່ງກັນ ແລະ ກັນ. ເມື່ອມີນັກຮຽນເຂົ້າມາໃນເຕັ້ນຫຼາຍຂຶ້ນກໍຈະເຮັດໃຫ້ພື້ນທີ່ຫວ່າງເລີ່ມຄັບແຄບລົງ ເຮັດໃຫ້ທຸກຄົນໄດ້ຮຽນຮູ້ທີ່ຈະແບ່ງປັນພື້ນທີ່ຂອງເຂົາເຈົ້າໃຫ້ໝູ່ເພື່ອນ ແລະ ຫຼິ້ນຮ່ວມກັນ. ການຫລິ້ນເກມນີ້ແມ່ນມີຄວາມສຳຄັນຕໍ່ນັກຮຽນເພາະພວກເຂົາໄດ້ເຂົ້າໃກ້ຊິດກັນ ແລະ ສົ່ງເສີມຄວາມຮູ້ສຶກຂອງການຢູ່ໃນສັງຄົມໃນຫ້ອງຮຽນ. ວິທີການທີ່ສ້າງສັນ ແລະ ນະວັດຕະກຳໃນການຮຽນຮູ້ ແລະ ການເຂົ້າສັງຄົມນີ້ເປັນຕົວຢ່າງທີ່ດີຂອງວິທີທີ່ຄູສອນສາມາດຊຸກຍູ້ໃຫ້ນັກຮຽນຂອງເຂົາເຈົ້າຮຽນຮູ້ຮ່ວມກັນ ແລະ ສ້າງຄວາມສຳພັນທີ່ມີຄວາມຫມາຍໄດ້.

### ສິ່ງທີ່ເຈົ້າໄດ້ກັບໄປມີຫຍັງແນ່?

**ຊຸ່ມຊື່ນ**

**ການຮ່ວມມືກັນ**

**ຄວາມສຳພັນ**



